ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນະຄອນຫຼວງວຽງຈັນ**

ຄະນະສະເພາະກິດ ປ້ອງກັນ, ຄວບຄຸມ

ແລະ ແກ້ໄຂການລະບາດຂອງພະຍາດ COVID-19

ເລກທີ: 013/ສພກ.ນວ

ວັນທີ 04 ມິຖຸນາ 2021

## ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ຢູ່ນະຄອນຫຼວງວຽງຈັນ

**ເລື່ອງ:** ເງື່ອນໄຂການອະນຸຍາດເດີນທາງເຂົ້າ-ອອກ ນະຄອນຫຼວງວຽງຈັນ ແຕ່ວັນທີ 05-19 ມິຖຸນາ 2021.

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 595/ຫສນຍ, ລົງວັນທີ 04 ມິຖຸນາ 2021.
- ອີງຕາມ ແຈ້ງການຂອງຫົວໜ້າຄະນະສະເພາະກິດ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດພະຍາດ COVID-19 ນະຄອນຫຼວງວຽງຈັນ ສະບັບເລກທີ 012/ສພກ.ນວ, ລົງວັນທີ 04 ມິຖຸນາ 2021.

ຄະນະສະເພາະກິດ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ນະຄອນຫຼວງວຽງຈັນ ຂໍແຈ້ງມາຍັງບັນດາທ່ານຊາບ ກ່ຽວກັບເງື່ອນໄຂໃນການອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມຈຳເປັນເດີນທາງເຂົ້າ-ອອກ ນະຄອນຫຼວງວຽງຈັນ ມີດັ່ງນີ້:

**I. ການຂໍອະນຸຍາດ.**

1. ຂະບວນລົດຜູ້ນຳ, ລົດສະຫຼາມ, ລົດສົ່ງຄົນເຈັບ, ລົດກູ້ໄພ, ລົດດັບເພີງ ແລະ ລົດຄະນະສະເພາະກິດ, ລົດຂົນສົ່ງສິນຄ້າ, ຂົນສົ່ງໂຄງການ ແລະ ເຄື່ອງຮັບໃຊ້ການຜະລິດ ບໍ່ຈຳເປັນຂໍອະນຸຍາດ;

2. ນັກການທູດ, ຊ່ຽວຊານ, ວິຊາການ ຈາກອົງການຈັດຕັ້ງສາກົນ: ໃຫ້ມີໃບສະເໜີຈາກສະຖານທູດ ຫຼື ອົງການຂອງຕົນ ເພື່ອຂໍອະນຸຍາດເດີນທາງ ຈາກຄະນະສະເພາະກິດ ສູນກາງ;

3. ພະນັກງານຂອງລັດ ຂັ້ນສູນກາງ ແລະ ກຳລັງ ປກຊ-ປກສ ໃຫ້ຂໍອະນຸຍາດຈາກການຈັດຕັ້ງຂອງຕົນ;

4. ພະນັກງານລັດຂັ້ນທ້ອງຖິ່ນ, ພະນັກງານວິສາຫະກິດ ແລະ ພາກສ່ວນເອກະຊົນ (ນິຕິບຸກຄົນ) ໃຫ້ມີໃບສະເໜີຈາກພາກສ່ວນຕົນ;

5. ນັກບວດ: ໃຫ້ມີໃບສະເໜີຈາກວັດ, ໂບດ ຫຼື ອົງການປົກຄອງບ້ານຂອງຕົນ;

6. ປະຊາຊົນ: ໃຫ້ມີໃບສະເໜີຂອງຕົນໂດຍຜ່ານອົງການປົກຄອງບ້ານ;

7. ຄົນຕ່າງດ້າວ ແລະ ຊາວຕ່າງປະເທດ (ບຸກຄົນ): ໃຫ້ມີໃບສະເໜີຂອງຕົນ;

8. ບໍ່ອະນຸຍາດໃຫ້ ບຸກຄົນທີ່ເປັນກຸ່ມສ່ຽງຢູ່ເຂດ/ບ້ານແດງ, ຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອພະຍາດ COVID-19, ບຸກຄົນທີ່ຖືກຈຳກັດບໍລິເວນ ແລະ ບຸກຄົນທີ່ປິ່ນປົວຫາຍດີ ທີ່ຈຳກັດບໍລິເວນບໍ່ຄົບ 14 ມື້ ເດີນທາງເຂົ້າ-ອອກ ນະຄອນຫຼວງວຽງຈັນ ເດັດຂາດ.

**II. ການປະກອບເອກະສານ.**

1. ໃບສະເໜີຂໍອະນຸຍາດ ໃຫ້ມີຂໍ້ມູນຈະແຈ້ງ: ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ທີ່ຢູ່ປະຈຸບັນ (ບ້ານ, ເມືອງ, ແຂວງ) ຫຼື ບ່ອນເຮັດວຽກ, ຈຸດປະສົງການເດີນທາງ (ໄປປະຕິບັດໜ້າທີ່ທາງການ, ໄປວຽກໄຖງານໄປທຳການຜະລິດ, ໄປຂົນສົ່ງສິນຄ້າ-ສະບຽງອາຫານ, ພີ່ນ້ອງເຈັບເປັນ-ເສຍຊີວິດ, ໄປໂຮງໝໍ, ກັບຄືນພູມລຳເນົາ ສຳລັບຄົນຕ່າງແຂວງທີ່ຄ້າງຢູ່ນະຄອນຫຼວງ), ສະຖານທີ່ຈະເດີນທາງໄປ (ບ້ານ, ເມືອງ, ແຂວງ), ພາຫະນະທີ່ຈະນຳໃຊ້ (ຍີ່ຫໍ້, ປະເພດ, ສີ ແລະ ເລກທະບຽນ);

2. ເອກະສານເພີ່ມເຕີມ: ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໃບຢັ້ງຢືນທີ່ຢູ່ ຫຼື ຂໍ້ຕົກລົງແຕ່ງຕັ້ງໄປວຽກທາງການ, ໃບຢັ້ງຢືນການຮັບວັກຊີນປ້ອງກັນ COVID-19 ຄົບ 2 ເຂັມ, ສຳເນົາໃບທະບຽນລົດ, ສຳລັບຄົນຕ່າງປະເທດ ຕ້ອງມີເອກະສານຢັ້ງຢືນການອະນຸຍາດເຂົ້າມາ ສປປ ລາວ, ສຳເນົາ PASSPORT, ໃບຢັ້ງຢືນການຈຳກັດບໍລິເວນ ຄົບ 14 ວັນ, ໃບຢັ້ງຢືນຜົນກວດ COVID-19 ແລະ ໃບຢັ້ງຢືນການຮັບວັກຊີນປ້ອງກັນ COVID-19 ຄົບ 2 ເຂັມ.

**III. ການຮັບເອກະສານຂໍອະນຸຍາດເດີນທາງ ເປີດທຸກວັນ ເວລາ 08:00-16:00 ໂມງ:**

ໃຫ້ສົ່ງເອກະສານຂໍອະນຸຍາດ ຜ່ານທາງ WhatsApp ຂອງພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ 020 9591 7490, 020 9285 3909, 020 2322 2592, 020 9514 4492; ເບີໂທສອບຖາມ: 020 9261 8918, 020 9657 3058, 020 5889 4533, 020 9857 6462, 020 2928 8977, 020 9535 3453, 020 2980 4250.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຮອງເຈົ້າຄອງ, ຫົວໜ້າຄະນະສະເພາະກິດ**
**ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ**
**ຂອງພະຍາດ COVID-19 ນະຄອນຫຼວງວຽງຈັນ**

ພູວົງ ວົງຄຳຊາວ